ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຍຸຕິທຳ

ເລກທີ 2001 /ຍທ
ນະຄອນຫຼວງວຽງຈັນ, ວັນທີ 25 ພ: ສ 2026

ຄຳແນະນຳ
ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສັນຊາດລາວ

- ອີງຕາມ ກົດໝາຍວ່າດ້ວຍສັນຊາດລາວ ເລກທີ 29/ສພຊ, ລົງວັນທີ 01 ພະຈິກ 2017;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງຍຸຕິທຳ ເລກທີ 127/ນຍ, ລົງວັນທີ 25 ພຶດສະພາ 2026;
- ອີງຕາມ ໜັງສືສະເໜີ ຂອງກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ເລກທີ 420/ກຄສຍ, ລົງວັນທີ 23 ກໍລະກົດ 2026.

ລັດຖະມົນຕີ ກະຊວງຍຸຕິທຳ ອອກຄຳແນະນຳ

I. ຈຸດປະສົງ

ຄຳແນະນຳສະບັບນີ້ສ້າງຂຶ້ນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສັນຊາດລາວ ໃຫ້ມີຄວາມເຂົ້າໃຈງ່າຍ, ເປັນເອກະພາບ, ສະດວກ, ວ່ອງໄວ, ຖືກຕ້ອງ, ສອດຄ່ອງຕາມກົດໝາຍ ແລະ ຄວາມເປັນຈິງ ແນໃສ່ເພີ່ມທະວີນິຕິທຳ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ທີ່ມາຂໍເອົາສັນຊາດລາວ, ຂໍປະສັນຊາດລາວ ແລະ ຂໍເອົາສັນຊາດລາວຄືນ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳ.

II. ແນະນຳການຈັດຕັ້ງປະຕິບັດບາງເນື້ອໃນ

ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ແລະ ຄົນທີ່ມີເຊື້ອຊາດລາວ ມີຈຸດປະສົງຂໍເອົາສັນຊາດລາວ, ຂໍປະສັນຊາດລາວ ແລະ ຂໍເອົາສັນຊາດລາວຄືນ ປະກອບເອກະສານ ດັ່ງນີ້:

1. ເອກະສານປະກອບການຂໍເອົາສັນຊາດລາວ ແລະ ຂໍເອົາສັນຊາດລາວຄືນ

ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ແລະ ຄົນທີ່ມີເຊື້ອຊາດລາວ ທີ່ມີຈຸດປະສົງຂໍເອົາສັນຊາດລາວ ແລະ ຂໍເອົາສັນຊາດລາວຄືນ ໃຫ້ປະກອບເອກະສານ ດັ່ງນີ້:

1) ຄຳຮ້ອງຂໍເອົາສັນຊາດລາວ;
2) ໜັງສືຜ່ານແດນ;
3) ສຳເນົາສຳມະໂນຄົວ ຫຼື ຢັ້ງຢືນຂໍ້ມູນສຳມະໂນຄົວ;
4) ສຳເນົາບັດປະຈຳຕົວ;
5) ຊີວະປະຫວັດທີ່ຈະແຈ້ງ ແລະ ຖືກຕ້ອງ;
6) ໃບຢັ້ງຢືນທີ່ຢູ່;
7) ໃບຢັ້ງຢືນການເກີດຂອງຜູ້ຮ້ອງຂໍ ແລະ ຂອງລູກຕິດຕາມທີ່ບໍ່ທັນພົ້ນກະສຽນອາຍຸ 18 ປີ;

8) ໃບຢັ້ງຢືນຄຳເຫັນດີຂອງລູກຕິດຕາມທີ່ມີອາຍຸແຕ່ 8 ປີ ຂຶ້ນໄປ;
9) ໃບຢັ້ງຢືນການແຕ່ງດອງ;
10) ປະກາສະນີຍະບັດ ຫຼື ໃບຢັ້ງຢືນການສຶກສາ ຫຼື ໃບກວດສອບດ້ານພາສາລາວ;
11) ໃບແຈ້ງໂທດຂອງຜູ້ຮ້ອງຂໍ ແລະ ຜູ້ຮັບປະກັນ;
12) ໃບຢັ້ງຢືນການເຊື່ອມເຂົ້າສັງຄົມ ແລະ ວັດທະນະທຳລາວ;
13) ໃບຢັ້ງຢືນສຸຂະພາບ;
14) ໃບຢັ້ງຢືນການປະສັນຊາດເດີມຂອງຜູ້ຮ້ອງຂໍ (ຍົກເວັ້ນຄົນບໍ່ມີສັນຊາດ);
15) ໃບຢັ້ງຢືນການມີພູມລຳເນົາຖາວອນ;
16) ໃບຢັ້ງຢືນການມີວຽກເຮັດງານທຳຢູ່ ສປປ ລາວ;
17) ໃບຢັ້ງຢືນຖານະທາງດ້ານເສດຖະກິດ;
18) ໃບຢັ້ງຢືນການປະຕິບັດພັນທະຕ່າງໆ ຕາມກົດໝາຍ;
19) ໃບຢັ້ງຢືນການປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ;
20) ໃບຢັ້ງຢືນການຮັບປະກັນ;
21) ເອກະສານຢັ້ງຢືນການເສຍຄ່າທຳນຽມ ແລະ ຄ່າບໍລິການກ່ຽວກັບສັນຊາດລາວ;
22) ຮູບຖ່າຍຂະໜາດ 3x4 ຈຳນວນ 6 ໃບ (ຮູບຖ່າຍບໍ່ເກີນ 3 ເດືອນ).

2. ເອກະສານປະກອບການຂໍປະສັນຊາດລາວ ສຳລັບພົນເມືອງລາວທີ່ຢູ່ພາຍໃນປະເທດ

ພົນລະເມືອງລາວຜູ້ທີ່ອາໄສຢູ່ພາຍໃນປະເທດ ແລະ ເດັກທີ່ບໍ່ເຖິງກະສຽນອາຍຸ 18 ປີ ຕ້ອງການປະສັນຊາດລາວໃຫ້ປະກອບເອກະສານ ດັ່ງນີ້:

1) ຄຳຮ້ອງຂໍປະສັນຊາດລາວ;
2) ໜັງສືຜ່ານແດນ;
3) ສຳເນົາສຳມະໂນຄົວ ຫຼື ຢັ້ງຢືນຂໍ້ມູນສຳມະໂນຄົວ;
4) ສຳເນົາບັດປະຈຳຕົວ;
5) ຊີວະປະຫວັດທີ່ຈະແຈ້ງ ແລະ ຖືກຕ້ອງ;
6) ໃບຢັ້ງຢືນທີ່ຢູ່;
7) ໃບຢັ້ງຢືນການເກີດຂອງຜູ້ຮ້ອງຂໍ ແລະ ຂອງລູກຕິດຕາມທີ່ບໍ່ທັນຟົ້ນກະສຽນອາຍຸ 18 ປີ;
8) ໃບຢັ້ງຢືນຄຳເຫັນດີຂອງລູກຕິດຕາມທີ່ມີອາຍຸແຕ່ 8 ປີຂຶ້ນໄປ;
9) ໃບຢັ້ງຢືນການແຕ່ງດອງ;
10) ປະກາສະນີຍະບັດ ຫຼື ໃບຢັ້ງຢືນການສຶກສາ (ຖ້າມີ);
11) ໃບແຈ້ງໂທດຂອງຜູ້ຮ້ອງຂໍ ແລະ ຜູ້ຮັບປະກັນ;
12) ໃບຢັ້ງຢືນສຸຂະພາບຂອງຜູ້ຮ້ອງຂໍ;
13) ໃບຢັ້ງຢືນຮັບເຂົ້າສັນຊາດຂອງປະເທດທີ່ຕົນອາໄສຢູ່;
14) ໃບຢັ້ງຢືນການມີວຽກເຮັດງານທຳ;
15) ໃບຢັ້ງຢືນຖານະທາງດ້ານເສດຖະກິດ;
16) ໃບຢັ້ງຢືນການປະຕິບັດພັນທະຂອງພົນລະເມືອງລາວ;
17) ໃບຢັ້ງຢືນການປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ;
18) ໃບຢັ້ງຢືນການຮັບປະກັນ;

19) ເອກະສານຢັ້ງຢືນການເສຍຄ່າທຳນຽມ ແລະ ຄ່າບໍລິການກ່ຽວກັບສັນຊາດລາວ;

20) ຮູບຖ່າຍຂະໜາດ 3x4 ຈຳນວນ 6 ໃບ (ຮູບຖ່າຍບໍ່ເກີນ 3 ເດືອນ).

ສຳລັບການຂໍປະສັນຊາດຂອງເດັກທີ່ບໍ່ທັນເຖິງອາຍຸກະສຽນ 18 ປີ ແມ່ນໃຫ້ພໍ່ ຫຼື ແມ່ ເປັນຜູ້ປະກອບເອກະສານຕາງໜ້າເດັກ ດັ່ງນີ້:

ໃນກໍລະນີເດັກໄດ້ເກີດຢູ່ໃນດິນແດນຂອງ ສປປ ລາວ ທີ່ຍັງບໍ່ທັນເຖິງກະສຽນອາຍຸ 18 ປີ ຊຶ່ງພໍ່ ຫຼື ແມ່ ເປັນຄົນຕ່າງປະເທດ ມີທີ່ຢູ່ຖາວອນຢູ່ຕ່າງປະເທດ ມີຈຸດປະສົງຂໍປະສັນຊາດລາວໃຫ້ລູກ ພໍ່ ຫຼື ແມ່ ທີ່ເປັນພົນລະເມືອງລາວ ຕ້ອງປະກອບເອກະສານຄຳຮ້ອງຂໍປະສັນຊາດລາວຕາງໜ້າລູກ.

ໃນກໍລະນີເດັກໄດ້ເກີດຢູ່ນອກດິນແດນຂອງ ສປປ ລາວ ພໍ່ ຫຼື ແມ່ ເປັນຄົນຕ່າງປະເທດ ມີທີ່ຢູ່ຖາວອນຢູ່ຕ່າງປະເທດ ສັນຊາດຂອງເດັກ ໃຫ້ຖືເອົາຕາມຄຳເຫັນດີຂອງພໍ່ ແລະ ແມ່.

3. ເອກະສານປະກອບການຂໍປະສັນຊາດລາວ ສຳລັບພົນເມືອງລາວທີ່ຢູ່ຕ່າງປະເທດ

ພົນລະເມືອງລາວຜູ້ທີ່ອາໄສຢູ່ຕ່າງປະເທດ ຕ້ອງການຂໍປະສັນຊາດລາວ ຕ້ອງໄດ້ປະກອບເອກະສານ ດັ່ງນີ້:

1) ຄຳຮ້ອງຂໍປະສັນຊາດລາວ;

2) ໃບຢັ້ງຢືນທີ່ຢູ່ຕ່າງປະເທດ;

3) ຊີວະປະຫວັດທີ່ຈະແຈ້ງ ແລະ ຖືກຕ້ອງ;

4) ໃບຢັ້ງຢືນການເກີດຂອງຜູ້ຮ້ອງຂໍ ແລະ ຂອງລູກຕິດຕາມທີ່ບໍ່ທັນພົ້ນກະສຽນອາຍຸ 18 ປີ;

5) ໜັງສືຜ່ານແດນ;

6) ສຳເນົາສຳມະໂນຄົວ ຫຼື ຢັ້ງຢືນຂໍ້ມູນສຳມະໂນຄົວ;

7) ສຳເນົາບັດປະຈຳຕົວ;

8) ໃບຢັ້ງຢືນຮັບເຂົ້າສັນຊາດຂອງປະເທດທີ່ຜູ້ຮ້ອງຂໍອາໄສຢູ່;

9) ໃບຢັ້ງຢືນການແຕ່ງດອງ;

10) ປະກາສະນີຍະບັດ ຫຼື ໃບຢັ້ງຢືນການສຶກສາ;

11) ໃບແຈ້ງໂທດຂອງ ສປປ ລາວ ຫຼື ປະເທດທີ່ຕົນອາໄສຢູ່;

12) ໃບຢັ້ງຢືນສຸຂະພາບ;

13) ໃບຢັ້ງຢືນການປະຕິບັດພັນທະຂອງພົນລະເມືອງລາວ;

14) ໃບຢັ້ງຢືນຮັບປະກັນ;

15) ເອກະສານຢັ້ງຢືນການເສຍຄ່າທຳນຽມ ແລະ ຄ່າບໍລິການກ່ຽວກັບສັນຊາດລາວ;

16) ຮູບຖ່າຍຂະໜາດ 3x4 ຈຳນວນ 6 ໃບ (ຮູບຖ່າຍບໍ່ເກີນ 3 ເດືອນ).

ທຸກເອກະສານຕ້ອງປະກອບເປັນພາສາລາວ, ຖ້າເອກະສານໃດຫາກເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ແລະ ຢັ້ງຢືນການແປຈາກອົງການທະບຽນສານ ແລະ ເອກະສານສະບັບສຳເນົາຕ້ອງມີການຢັ້ງຢືນຄວາມຖືກຕ້ອງຕາມສະບັບເດີມຈາກອົງການທະບຽນສານ. ສຳລັບພົນລະເມືອງລາວຜູ້ອາໄສຢູ່ຕ່າງປະເທດແມ່ນໃຫ້ເອົາເອກະສານໄປຂໍການຢັ້ງຢືນນຳໜ່ວຍງານທະບຽນສານປະຈຳສະຖານທູດ, ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ແຫ່ງ ສປປ ລາວ ປະຈຳປະເທດດັ່ງກ່າວ ຫຼື ກະຊວງການຕ່າງປະເທດ.

ຜູ້ທີ່ມີຈຸດປະສົງຂໍເອົາສັນຊາດລາວ, ຂໍປະສັນຊາດລາວ ແລະ ການຂໍເອົາສັນຊາດລາວຄືນ ໃຫ້ພົວພັນເອົາແບບພົ້ມຢູ່ຂັ້ນສູນກາງນຳກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ, ກະຊວງຍຸຕິທຳ, ຂັ້ນແຂວງພະແນກຍຸຕິທຳແຂວງ,

ນະຄອນ, ເທດສະບານ, ຂັ້ນເມືອງ ຫ້ອງການຍຸຕິທຳເມືອງ ພ້ອມທັງຮັບຄຳແນະນຳຈາກພາກສ່ວນທີ່ກ່ຽວຂ້ອງກ່ຽວກັບ ການປະກອບເອກະສານ ແລະ ຂັ້ນຕອນການຍື່ນເອກະສານດັ່ງກ່າວ.

2. ການຍື່ນຄຳຮ້ອງ

2.1. ການຍື່ນຄຳຮ້ອງ ຂໍເອົາສັນຊາດລາວ ແລະ ຂໍເອົາສັນຊາດລາວຄືນ

ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ແລະ ຄົນທີ່ມີເຊື້ອຊາດລາວ ຢູ່ ສປປ ລາວ ມີຈຸດປະສົງຂໍເອົາສັນຊາດລາວ ຂໍປະສັນຊາດລາວ ແລະ ຂໍເອົາສັນຊາດລາວຄືນ ໃຫ້ຍື່ນສຳນວນຄຳຮ້ອງຕໍ່ພາກສ່ວນຕ່າງໆທີ່ກ່ຽວຂ້ອງຕາມແຕ່ລະຂັ້ນ ດັ່ງນີ້:

1) ປະທານບ້ານ;
2) ຄະນະກຳມະການປົກຄອງຕາແສງ;
3) ກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ນະຄອນ;
4) ຫ້ອງການຍຸຕິທຳເມືອງ, ນະຄອນ;
5) ກອງບັນຊາການປ້ອງກັນຄວາມສະຫງົບ ນະຄອນຫຼວງ, ແຂວງ;
6) ພະແນກຍຸຕິທຳ ນະຄອນຫຼວງ, ແຂວງ;
7) ກະຊວງປ້ອງກັນຄວາມສະຫງົບ;
8) ກະຊວງຍຸຕິທຳ.

2.2. ການຍື່ນຄຳຮ້ອງຂໍປະສັນຊາດລາວ

ພົນລະເມືອງລາວ ທີ່ມີຈຸດປະສົງຂໍປະສັນຊາດລາວໃຫ້ຍື່ນສຳນວນຄຳຮ້ອງຕໍ່ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ດັ່ງນີ້:

1) ສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ແຫ່ງ ສປປ ລາວ ປະຈຳ ປະເທດ ທີ່ຜູ້ຮ້ອງຂໍອາໄສຢູ່;
2) ກົມກົງສຸນ, ກະຊວງການຕ່າງປະເທດ ແຫ່ງ ສປປ ລາວ;
3) ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ, ກະຊວງປ້ອງກັນຄວາມສະຫງົບ;
4) ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ, ກະຊວງຍຸຕິທຳ;
5) ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.

ສຳລັບຄົນລາວທີ່ອາໄສຢູ່ຕ່າງປະເທດ ຊຶ່ງມີຈຸດປະສົງຂໍປະສັນຊາດລາວ ສາມາດຍື່ນສຳນວນຄຳຮ້ອງຕໍ່ສະຖານ ເອກອັກຄະລັດ ຖະທູດ ຫຼື ສະຖານກົງສຸນໃຫຍ່ ຂອງ ສປປ ລາວ ປະຈຳປະເທດນັ້ນ ເພື່ອກວດກາຄວາມຖືກຕ້ອງ, ຄົບ ຖ້ວນ ຈາກນັ້ນກໍສະເໜີຕໍ່ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ, ກະຊວງປ້ອງກັນຄວາມສະຫງົບ ໂດຍຜ່ານ ກົມກົງສຸນ, ກະ ຊວງການຕ່າງປະເທດ ແຫ່ງ ສປປ ລາວ ໃນກໍລະນີທີ່ບໍ່ມີສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງ ສຸນໃຫຍ່ຂອງ ສປປ ລາວ ປະຈຳປະເທດນັ້ນ ໃຫ້ຍື່ນສຳນວນຄຳຮ້ອງຜ່ານກະຊວງການຕ່າງປະເທດ ແຫ່ງ ສປປ ລາວ.

III. ການແບ່ງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດວຽກງານສັນຊາດ

1. **ຫ້ອງການຍຸຕິທຳເມືອງ, ນະຄອນ:**

- ຄົ້ນຄວ້າ, ກວດກາ ແລະ ມີຄຳເຫັນຢັ້ງຢືນ ກ່ຽວກັບການປະກອບເອກະສານຂອງຜູ້ຮ້ອງຂໍຖືກຕ້ອງ ຕາມຂັ້ນ ຕອນທີ່ພາກສ່ວນກ່ຽວຂ້ອງຢັ້ງຢືນມາພາຍໃນກຳນົດຊາວວັນ ແລ້ວສະເໜີຕໍ່ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ນະຄອນ;

- ໂຄສະນາ ເຜີຍແຜ່ເອກະສານ ແລະ ນິຕິກຳ ທີ່ກ່ຽວຂ້ອງກັບວຽກງານສັນຊາດໃຫ້ແກ່ປະຊາຊົນທີ່ຢູ່ລຽບຕາມຊາຍແດນຕິດຈອດ;

- ສະໜອງແບບພິມຂໍເອົາສັນຊາດລາວ, ຂໍປະສັນຊາດລາວ ແລະ ຂໍເອົາສັນຊາດລາວຄືນ ພ້ອມທັງໃຫ້ຄຳແນະນຳ;

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງກັບວຽກງານສັນຊາດ;

- ເກັບກຳສະຖິຕິບຸກຄົນທີ່ໄດ້ສັນຊາດລາວ, ຂໍປະສັນຊາດລາວ ແລະ ຂໍເອົາສັນຊາດລາວຄືນ ປະຈຳ 6 ເດືອນ, 1 ປີ ແລ້ວສົ່ງໃຫ້ພະແນກຍຸຕິທຳແຂວງ ເພື່ອສັງລວມລາຍງານໃຫ້ຂັ້ນເທິງຊາບ;

- ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມການເຄື່ອນໄຫວດຳລົງຊີວິດ ຂອງຜູ້ທີ່ໄດ້ຮັບເຂົ້າເປັນພົນລະເມືອງລາວ, ຖ້າເຫັນວ່າຜູ້ກ່ຽວມີການປະພຶດຕົນທີ່ຜິດຕໍ່ກົດໝາຍວ່າດ້ວຍສັນຊາດ ມາດຕາ 24 ໃຫ້ລາຍງານມາຍັງກະຊວງຍຸຕິທຳດ່ວນ ເພື່ອສະເໜີຖອນສັນຊາດລາວຄືນ;

- ໃຫ້ຄຳປຶກສາກ່ຽວກັບການຂໍເອົາສັນຊາດລາວ, ຂໍປະສັນຊາດລາວ ແລະ ຂໍເອົາສັນຊາດລາວຄືນ.

2. ພະແນກຍຸຕິທຳ ແຂວງ, ນະຄອນຫຼວງ:

- ຄົ້ນຄວ້າ, ກວດກາ ແລະ ມີຄຳເຫັນຢັ້ງຢືນຄືນກ່ຽວກັບການປະກອບເອກະສານຂອງຜູ້ຮ້ອງຂໍ ຄົບຖ້ວນ, ຖືກຕ້ອງ ຕາມຂັ້ນຕອນທີ່ພາກສ່ວນກ່ຽວຂ້ອງຢັ້ງຢືນມາພາຍໃນກຳນົດຊາວວັນ ແລ້ວສະເໜີຕໍ່ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນຫຼວງ;

- ໂຄສະນາ ເຜີຍແຜ່ເອກະສານ ແລະ ນິຕິກຳ ທີ່ກ່ຽວຂ້ອງກັບວຽກງານສັນຊາດໃຫ້ແກ່ປະຊາຊົນທີ່ຢູ່ລຽບຕາມຊາຍແດນຕິດຈອດ;

- ສະໜອງແບບພິມຂໍເອົາສັນຊາດລາວ, ຂໍປະສັນຊາດລາວ ແລະ ຂໍເອົາສັນຊາດລາວຄືນ ພ້ອມທັງໃຫ້ຄຳແນະນຳ;

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງກັບວຽກງານສັນຊາດ;

- ເກັບກຳສະຖິຕິບຸກຄົນທີ່ໄດ້ສັນຊາດລາວ, ຂໍປະສັນຊາດລາວ ແລະ ຂໍເອົາສັນຊາດລາວຄືນປະຈຳ 6 ເດືອນ, 1 ປີ ສະຫຼຸບສັງລວມແລ້ວລາຍງານໃຫ້ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ, ກະຊວງຍຸຕິທຳ;

- ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຕິດຕາມການດຳລົງຊີວິດຂອງຜູ້ທີ່ໄດ້ຮັບເຂົ້າເປັນພົນລະເມືອງລາວ, ຖ້າເຫັນວ່າຜູ້ກ່ຽວມີການປະພຶດຕົນທີ່ຜິດຕໍ່ກົດໝາຍວ່າດ້ວຍສັນຊາດ ມາດຕາ 24 ໃຫ້ລາຍງານມາຍັງກະຊວງຍຸຕິທຳດ່ວນ ເພື່ອສະເໜີຖອນສັນຊາດລາວຄືນ;

- ໃຫ້ຄຳປຶກສາກ່ຽວກັບການຂໍເອົາສັນຊາດລາວ, ຂໍປະສັນຊາດລາວ ແລະ ຂໍເອົາສັນຊາດລາວຄືນ.

3. ກະຊວງຍຸຕິທຳ:

- ຄົ້ນຄວ້າ, ກວດກາຄວາມຖືກຕ້ອງໃນການປະກອບເອກະສານຂອງຜູ້ຮ້ອງຂໍເອົາສັນຊາດລາວ, ຂໍປະສັນຊາດລາວຂໍ, ເອົາສັນຊາດລາວຄືນ ພ້ອມທັງຈັດສຳພາດກ່ຽວກັບຄວາມຮັບຮູ້ທາງດ້ານການເມືອງ-ກົດໝາຍ, ການເຊື່ອມເຂົ້າສັງຄົມ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ຂອງ ສປປ ລາວ ແລະ ທົດສອບຄວາມສາມາດດ້ານການເວົ້າ, ການອ່ານ ແລະ ການຂຽນພາສາລາວ ເມື່ອເຫັນວ່າມີເງື່ອນໄຂຖືກຕ້ອງ, ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສັນຊາດລາວ ພາຍໃນກຳນົດ ສາມສິບວັນ ຕ້ອງນຳສະເໜີຂັ້ນເທິງພິຈາລະນາ;

- ໂຄສະນາ ເຜີຍແຜ່ເອກະສານ ແລະ ນິຕິກຳ ທີ່ກ່ຽວຂ້ອງກັບວຽກງານສັນຊາດໃຫ້ແກ່ປະຊາຊົນທີ່ຢູ່ລຽບຕາມຊາຍແດນຕິດຈອດ ໂດຍການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

- ສະໜອງແບບພິມຂໍເອົາສັນຊາດລາວ, ຂໍປະສັນຊາດລາວ ແລະ ຂໍເອົາສັນຊາດລາວຄືນ, ຂໍເປັນພົນລະເມືອງກິດຕິມະສັກ ພ້ອມທັງໃຫ້ຄຳແນະນຳ;

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງກັບວຽກງານສັນຊາດ;

- ສະຫຼຸບ, ສັງລວມສະຖິຕິບຸກຄົນທີ່ໄດ້ສັນຊາດລາວ, ຂໍປະສັນຊາດລາວ ແລະ ຂໍເອົາສັນຊາດລາວຄືນ ປະຈຳ 6 ເດືອນ, 1 ປີ ເພື່ອລາຍງານຂັ້ນເທິງ;

- ໃຫ້ຄຳປຶກສາກ່ຽວກັບການຂໍເອົາສັນຊາດລາວ, ຂໍປະສັນຊາດລາວ ແລະ ຂໍເອົາສັນຊາດລາວຄືນ.

IV. ການຈັດຕັ້ງປະຕິບັດ

ມອບໃຫ້ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ເປັນເຈົ້າການປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ໃຫ້ໄດ້ຮັບຜົນດີ.

ໃນການຈັດຕັ້ງປະຕິບັດຕົວຈິງຫາກມີບັນຫາຫຍຸ້ງຍາກປະການໃດໃຫ້ລາຍງານຄະນະນຳກະຊວງຍຸຕິທຳ ເພື່ອມີທິດຊີ້ນຳແກ້ໄຂໃຫ້ທັນເວລາ.

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ຄຳພັນ ພົມມະທັດ